# ທະນາຄານບູຢອງລາວ ຈຳກັດ

# BOOYOUNG LAO BANK CO., LTD.




ບົດລາຍງານປະຈຳປີ 2009-2011

Annual Report 2009-2011

ທະນາຄານບູຢອງລາວ ຈຳກັດ

BOOYOUNG LAO BANK CO., LTD.

# ບົດລາຍງານປະຈຳປີ

# 2009-2011

# ປະຫວັດຄວາມເປັນມາ

ທະນາຄານບູຢອງລາວ ຈຳກັດ ເປັນຫົວໜ່ວຍທຸລະກິດຫຸ້ນສ່ວນຂອງບໍລິສັດບູຢອງ ຊຶ່ງເປັນບໍລິສັດທີ່ໃຫຍ່ນອນຢູ່ໃນອັນດັບແຖວໜ້າຂອງ ສາທະລະນະລັດເກົາຫລີ ທີ່ໄດ້ດຳເນີນໃນຮູບແບບດ້ານອະສັງຫາລິມະຊັບ ທີ່ໄດ້ກໍ່ຕັ້ງຂຶ້ນມາແຕ່ປີ 1983 ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ລີ ຈຸງ ກຶນ ( Mr. Lee Joong Keun). ບໍລິສັດບູຢອງໄດ້ມີການເຕີບໃຫຍ່ຂະຫຍາຍຕົວ ແລະມີການພັດທະນາຂຶ້ນມາຢ່າງຕໍ່ເນື່ອງ ຍ້ອນວ່າ ໄດ້ເຮັດທຸລະກິດໃນຫລາຍຮູບແບບເຊັ່ນ: ປ່ອຍເງິນກູ້ໃຫ້ປະຊາຊົນເພື່ອນຳໃຊ້ເຂົ້າໃນການປຸກສ້າງອາຄານ, ສະຖານທີ່ອາໃສ ແລະ ອື່ນໆ.

ປະເທດລາວເປັນປະເທດທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະເປັນປະເທດທີ່ບໍ່ມີທາງອອກສູ່ທະເລ. ຍ້ອນສະພາບເງື່ອນໄຂທີ່ເອື້ອອຳນວຍຫລາຍຢ່າງ ຈຶ່ງກາຍເປັນຈຸດທີ່ສົນໃຈຂອງນັກລົງທຶນທັງພາຍໃນແລະຕ່າງປະເທດ ເຂົ້າມາລົງທຶນໃນປະເທດລາວຫລາຍຂະແໜງເຊັ່ນວ່າ ຂຸດຄົ້ນບໍ່ແຮ່, ພະລັງງານ, ການທ່ອງທ່ຽວແລະ ຂະແໜງອື່ນໆ ໂດຍສະເພາະ ຂະແໜງອຸດສາຫະກຳການເງິນ-ການທະນາຄານກໍມີການເຕີບໃຫຍ່ຂະຫຍາຍຕົວແລະກໍເປັນຂະແໜງໜຶ່ງທີ່ມີຄວາມສຳຄັນຕໍ່ກັບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

ຍ້ອນສະພາບເສດຖະກິດມີການຂະຫຍາຍຕົວ, ມີສະເຖຍລະພາບທາງດ້ານການເມືອງ, ມີລະບຽບກົດໝາຍຄຸ້ມຄອງແລະມີນະໂຍບາຍສົ່ງເສີມການລົງທຶນທີ່ຊັດເຈນ ຈຶ່ງກາຍເປັນສາເຫດເຮັດໃຫ້ບໍລິສັດບູຢອງຕັດສິນໃຈມາລົງທຶນຢູ່ໃນ ສປປ ລາວ ແລະ ໄດ້ຕົກລົງສ້າງຕັ້ງທະນາຄານບູຢອງລາວຈຳກັດຂຶ້ນໃນວັນທີ່ 23 ກັນຍາ 2009 ດວ້ຍທຶນຈົດທະບຽນ 100 ຕື້ກີບ ແລະ ມາເຖິງປະຈຸບັນນີ້ ທະນາຄານກໍໄດ້ເພີ່ມທຶນຈົດທະບຽນເປັນ 121 ຕື້ກີບ ແລະ ຈະເພີ່ມທຶນຈົດທະບຽນຂຶ້ນຕື່ມເປັນ 179 ຕື້ກີບ ລວມເປັນ 300 ຕື້ກີບ ພາຍໃນ 5 ປີຂ້າງໜ້າເຖິງປີ 2014 ຕາມລະບຽບກົດໝາຍຂອງທະນາຄານ ແຫ່ງ ສປປ ລາວ ວາງອອກ.